**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

--------------------

ນາຍົກລັດຖະມົນຕີ　　　　　　　　　　　　　　　　　　　　ເລກທີ 07 / ນຍ.

ນະຄອນຫລວງວຽງຈັນ, ວັນທີ 05.04.2017

## ຄໍາສັ່ງ

## ວ່າດ້ວຍການຂຶ້ນບັນຊີເຕົ້າໂຮມຊັບສິນທີ່ສານຕັດສິນຮິບເປັນຂອງລັດ

ເຖິງ : - ບັນດາທ່ານລັດຖະມົນຕີກະຊວງ ແລະ ຫົວໜ້າອົງການທຽບເທົ່າກະຊວງ.

- ທ່ານເຈົ້າຄອງນະຄອນຫລວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງໃນຂອບເຂດທົ່ວປະເທດ.

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍ ວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ເລກທີ 14/ຫສພ, ລົງວັນທີ 05 ກໍລະກົດ 2012;
- ອີງຕາມກົດໝາຍ ວ່າດ້ວຍການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ສະບັບເລກທີ 04/ຫສພ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມການສະເໜີລາຍງານ ຂອງກະຊວງການເງິນ ສະບັບເລກທີ 3607/ກງ, ລົງວັນທີ 22 ຕຸລາ 2015;

ເພື່ອເພີ່ມທະວີການກວດກາ ການຈັດຕັ້ງປະຕິບັດກົດໝາຍ, ລະບຽບການໃຫ້ມີຄວາມສັກສິດ ແນໃສ່ໃນການຄຸ້ມຄອງຊັບສິນປະເພດ, ເງິນ, ຄໍາ, ວັດຖຸມີຄ່າອື່ນໆ ລວມທັງພາຫະນະ ແລະ ອຸປະກອນຕ່າງໆ ທີ່ສານຕັດສິນຮິບເປັນຂອງລັດ ໃຫ້ມາຂຶ້ນທະບຽນ, ຂຶ້ນບັນຊີຄຸ້ມຄອງລວມສູນ, ແບ່ງປັນນໍາໃຊ້ ແລະ ຂາຍຊັບສິນດັ່ງກ່າວ ເພື່ອເອົາເງິນເຂົ້າງົບປະມານຂອງລັດ.

## ນາຍົກລັດຖະມົນຕີ ອອກຄໍາສັ່ງ

1. ໃຫ້ອົງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ສົ່ງບັນຊີ ແລະ ຂໍ້ມູນທັງໝົດ ກ່ຽວກັບຊັບສິນທີ່ຖືກຮິບເປັນຂອງລັດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ຂະແໜງການເງິນ ເພື່ອຂຶ້ນບັນຊີ ແລະ ຈົດທະບຽນເປັນຊັບສິນຂອງລັດ ໂດຍປະກອບແບບຟອມ ຕາມຂະແໜງການເງິນ.
2. ການແບ່ງປັນການນໍາໃຊ້ ແລະ ການຂາຍອອກຊັບສິນທີ່ຮິບມາເປັນຂອງລັດ ແມ່ນໃຫ້ປະຕິບັດ ດັ່ງນີ້:

- ຊັບສິນທີ່ບໍ່ມີສ່ວນພົວພັນກັບຢາເສບຕິດ ເມື່ອຂຶ້ນທະບຽນ ແລະ ຈົດເຂົ້າໃນບັນຊີຊັບສິນຂອງລັດຢ່າງຖືກຕ້ອງແລ້ວ ແມ່ນມອບໃຫ້ຂະແໜງການເງິນ ແຕ່ລະຂັ້ນນໍາສະເໜີ ລາຍງານຂັ້ນເທິງຂອງຕົນ ເພື່ອຕົກລົງແບ່ງປັນການນໍາໃຊ້ ຫຼື ຂາຍຊັບສິນຂອງລັດ ເພື່ອມອບເງິນເຂົ້າງົບປະມານ;

- ມອບໃຫ້ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານລາຍງານ ແລະ ສະໜອງຂໍ້ມູນໃຫ້ຂະແໜງການເງິນພາຍໃນ 7 ວັນ ນັບແຕ່ມື້ບັນທຶກການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
- ຊັບສິນທຸກປະເພດ ລວມທັງເງິນທີ່ພົວພັນກັບຢາເສບຕິດ ເມື່ອຂຶ້ນທະບຽນ ແລະ ຂຶ້ນບັນຊີຊັບສິນຂອງລັດຖືກຕ້ອງແລ້ວ ໃຫ້ຂະແໜງການເງິນ ນຳສະເໜີລາຍງານຂັ້ນເທິງພິຈາລະນາແບ່ງປັນການຄຸ້ມຄອງ, ນຳໃຊ້ ແລະ ຂາຍອອກ. ເງິນທີ່ໄດ້ຈາກການປະມູນຂາຍຊັບສິນດັ່ງກ່າວ ແມ່ນໃຫ້ມອບເຂົ້າກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ 70% ສ່ວນ 30% ແມ່ນມອບເຂົ້າງົບປະມານຂອງລັດ ຕາມ (ມາດຕາ 50) ຂອງກົດໝາຍ ວ່າດ້ວຍຢາເສບຕິດ ແລະ (ມາດຕາ 6) ຂອງກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ. ການຈັດຕັ້ງປະຕິບັດກອງທຶນ ແມ່ນໃຫ້ປະຕິບັດຕາມ (ມາດຕາ 17) ຂອງດຳລັດ ວ່າດ້ວຍກອງທຶນ ແລະ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຢ່າງເຂັ້ມງວດ ເພື່ອຫຼີກລ່ຽງການຈ່າຍນອກແຜນ ແລະ ຈ່າຍເກີນແຜນງົບປະມານ ໂດຍໃຫ້ມີການປະສານສົມທົບກັບຂະແໜງການເງິນ ໃນການຂຶ້ນແຜນລາຍຮັບ-ລາຍຈ່າຍ ຂອງກອງທຶນ ແລະ ໃຫ້ສາມາດຈົດຮັບ-ຈົດຈ່າຍ ຜ່ານລະບົບງົບປະມານປະຈຳປີ ຢ່າງຖືກຕ້ອງຕາມລະບຽບກົດໝາຍ. ໃຫ້ບັນດາອົງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ຕ້ອງເປັນເຈົ້າການ ແລະ ໃຫ້ການຮ່ວມມືໃນການສະໜອງຂໍ້ມູນ ເນື້ອໃນສຳນວນຂອງຄະດີ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ຂະແໜງການເງິນຢ່າງຄົບຖ້ວນ ແລະ ທັນເວລາ;

3. ໃຫ້ຂະແໜງການເງິນແຕ່ລະຂັ້ນ ຂຶ້ນບັນຊີ ແລະ ຈົດທະບຽນຊັບສິນທຸກປະເພດຊັບສິນ ທີ່ຖືກຮິບເປັນຂອງລັດ ເປັນຕົ້ນອະສັງຫາລິມະຊັບ, ສັງຫາລິມະຊັບ, ເງິນ, ທຶນ, ອຸປະກອນ ແລະ ວັດຖຸມີຄ່າ ທີ່ພົວພັນກັບຄະດີຢາເສບຕິດ ພ້ອມທັງລາຍງານໃຫ້ອຳນາດການປົກຄອງທ້ອງຖິ່ນ ແລະ ລັດຖະບານ ເພື່ອພິຈາລະນາແບ່ງປັນການນຳໃຊ້ ຫຼື ຂາຍຊັບສິນຂອງລັດ ຕາມຄວາມເໝາະສົມ ເພື່ອມອບເງິນເຂົ້າງົບປະມານຢ່າງລວມສູນ;

- ຖ້າຊັບສິນທີ່ຮິບເປັນເງິນສົດ ແມ່ນໃຫ້ມອບເຂົ້າງົບປະມານໂດຍກົງ ໂດຍຜ່ານການສັ່ງມອບຂອງ ຂະແໜງການເງິນ (ກົມຄຸ້ມຄອງຊັບສິນຂອງລັດ, ຫ້ອງການຄຸ້ມຄອງຊັບສິນຂອງລັດ ປະຈຳນະຄອນຫຼວງ, ແຂວງ ແລະ ໜ່ວຍງານຄຸ້ມຄອງຊັບສິນຂອງລັດ ປະຈຳເມືອງ);
- ຊັບສິນປະເພດທີ່ດິນ, ສິ່ງກໍ່ສ້າງ ໃຫ້ຂຶ້ນທະບຽນກ່ອນ ແລ້ວຈຶ່ງນຳສະເໜີລາຍງານຂັ້ນເທິງ ພິຈາລະນາກ່ຽວກັບການໃຫ້ເຊົ່າ, ໃຫ້ສຳປະທານ ເພື່ອເກັບລາຍຮັບເຂົ້າງົບປະມານ ຫຼື ນຳໃຊ້ເຂົ້າໃນວຽກງານລວມຂອງລັດ. ຊັບສິນໃນປະເພດນີ້ ບໍ່ອະນຸຍາດໃຫ້ມອບສິດນຳໃຊ້ໃຫ້ແກ່ບຸກຄົນເດັດຂາດ, ຖ້າບໍ່ໄດ້ຮັບການເຫັນດີຈາກລັດຖະບານ ຕາມ (ມາດຕາ 14 ວັກ 3) ຂອງກົດໝາຍ ວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ເລກທີ 14/ສພຊ, ລົງວັນທີ 05 ກໍລະກົດ 2012;
- ປະເພດພາຫະນະ, ກົນຈັກ, ວັດຖຸອຸປະກອນ ທີ່ສາມາດນຳໃຊ້ໄດ້ ໃຫ້ຄົ້ນຄວ້າພິຈາລະນາແບ່ງໃຫ້ຂະແໜງການທີ່ຂາດເຂີນ ແລະ ມີຄວາມຈຳເປັນກ່ອນ ແຕ່ໃຫ້ຕັດງົບປະມານຮ່ວງຊື້ໃໝ່ ຂອງຂະແໜງການນັ້ນລົງ;
- ປະເພດວັດຖຸອຸປະກອນ ທີ່ຕິດພັນກັບການຮັບໃຊ້ວຽກງານວິຊາສະເພາະໂດຍກົງ ເປັນຕົ້ນເຄື່ອງມືທາງການແພດ, ອາວຸດເສິກ ແລະ ສານເຄມີ ເຊິ່ງບໍ່ສາມາດແບ່ງປັນໃຫ້ຂະແໜງການອື່ນນຳໃຊ້ໄດ້ ແມ່ນຕ້ອງມອບໃຫ້ຂະແໜງການກ່ຽວຂ້ອງ ຄຸ້ມຄອງ ແລະ ນຳໃຊ້ຕໍ່ໄປ;
- ປະເພດວັດຖຸມີຄ່າ ໃຫ້ຈັດຕັ້ງດຳເນີນການຕີລາຄາມູນຄ່າຊັບສິນດັ່ງກ່າວ ແລ້ວເປີດການປະມູນຂາຍ ເພື່ອມອບເງິນເຂົ້າງົບປະມານທັງໝົດ;

4. ການສົ່ງຂໍ້ມູນ ແລະ ການແບ່ງປັນການນຳໃຊ້ ແລະ ຂາຍອອກຊັບສິນ ທີ່ຮິບມາເປັນຂອງລັດ ແມ່ນໃຫ້ປະຕິບັດ ດັ່ງນີ້:

- ພາຍຫຼັງສານປະຊາຊົນໄດ້ຕັດສິນໃນແຕ່ລະຄັ້ງ ແລະ ໃຊ້ໄດ້ຢ່າງເດັດຂາດແລ້ວ ຕ້ອງສົ່ງເອກະສານບັນຊີ ທີ່ຕົກລົງຮິບເປັນຂອງລັດ ໃຫ້ຂະແໜງການເງິນຢ່າງຄົບຖ້ວນ ແລະ ທັນເວລາ ເພື່ອສັງລວມລາຍງານ ແລະ ນຳສະເໜີຂັ້ນເທິງພິຈາລະນາ ໃນການແບ່ງປັນນຳໃຊ້ ຫຼື ປະມູນຂາຍເພື່ອມອບເຂົ້າງົບປະມານ;
- ການສົ່ງຂໍ້ມູນບັນຊີຊັບສິນຢູ່ຂັ້ນສູນກາງ ແມ່ນສົ່ງໃຫ້ກະຊວງການເງິນ (ກົມຄຸ້ມຄອງຊັບສິນຂອງລັດ) ຢູ່ທ້ອງຖິ່ນ ແມ່ນສົ່ງໃຫ້ພະແນກການເງິນປະຈຳແຂວງ, ນະຄອນຫຼວງ (ຫ້ອງການຄຸ້ມຄອງຊັບສິນຂອງລັດ) ຢູ່ຂັ້ນເມືອງ ແມ່ນສົ່ງໃຫ້ຫ້ອງການການເງິນປະຈຳເມືອງ (ໜ່ວຍງານຄຸ້ມຄອງຊັບສິນຂອງລັດ) ເປັນຜູ້ສັງລວມ;
- ກໍລະນີຂະແໜງປ້ອງກັນຄວາມສະຫງົບ ໄດ້ທຳການດຳເນີນຄະດີສຳເລັດ ແລະ ມີບົດບັນທຶກການຮິບຊັບແລ້ວ ຕ້ອງສົ່ງຂໍ້ມູນທັງໝົດ ພ້ອມດ້ວຍບັນຊີຊັບສິນ ທີ່ຖືກດຳເນີນຄະດີແລ້ວນັ້ນ ໃຫ້ຂະແໜງການເງິນເພື່ອສັງລວມ ແລະ ສະເໜີໄປຍັງອົງການໄອຍະການ ສັ່ງຟ້ອງສານຕັດສິນ;

5. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກໄດ້ຍັກຍອກເອົາເງິນຄ່າປັບໃໝ ແລະ ຊັບສິນທີ່ສານຮິບເປັນຂອງລັດ ໄປຄຸ້ມຄອງ ແລະ ນຳໃຊ້ ໂດຍບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ ຕາມທີ່ໄດ້ລະບຸໄວ້ຢູ່ໃນຂໍ້ທີ 4 ຂອງຄຳສັ່ງສະບັບນີ້ ຈະໄດ້ເກັບຄືນ;

- ຖ້າຫາກຊັບສິນດັ່ງກ່າວ ຫາກມີການນຳໃຊ້ເຂົ້າໃນການກະທຳຜິດ ຫຼື ໄດ້ຮັບຄວາມເສຍຫາຍ ຜູ້ກ່ຽວຕ້ອງໄດ້ຮັບຜິດຊອບສ້ອມແປງ, ໃຊ້ແທນຄ່າເສຍຫາຍຄືນໃຫ້ລັດ ຫຼື ປັບໃໝ ແລະ ລົງໂທດຕາມລະບຽບກົດໝາຍ;

6. ໃຫ້ທຸກພາກສ່ວນ, ຂະແໜງການ ແລະ ອົງການຈັດຕັ້ງອື່ນໆ ຈົ່ງໄດ້ພ້ອມກັນເອົາໃຈໃສ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ;
7. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**




ທອງລຸນ ສີສຸລິດ